ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----------------------------------------------

ພັກປະຊາຊົນປະຕິວັດລາວ ເລກທີ19/ຄລສພ

ຄະນະເລຂາທິການສູນກາງພັກ ນະຄອນຫລວງວຽງຈັນ, ວັນທີ 30 / 06 /2015

# ຄຳສັ່ງແນະນຳ
# ຂອງຄະນະເລຂາທິການສູນກາງພັກ
# ກ່ຽວກັບບຸກຄະລາກອນແນວລາວສ້າງຊາດຂັ້ນທ້ອງຖິ່ນ

-------------------

**ເຖິງ: ຄະນະພັກນະຄອນຫລວງ ແລະ ແຂວງໃນທົ່ວປະເທດ.**

- ອີງໃສ່ ກົດຫມາຍວ່າດ້ວຍແນວລາວສ້າງຊາດຫມວດທີ III, ມາດຕາ 10; 11 ກ່ຽວກັບລະບົບການຈັດຕັ້ງ ແລະ ໂຄງປະກອບບຸກຄະລາກອນຂອງແນວລາວສ້າງຊາດ.ເພື່ອແນໃສ່ເຮັດໃຫ້ໂຄງປະກອບບຸກຄະລາກອນຂອງແນວລາວສ້າງຊາດຂັ້ນທ້ອງຖິ່ນ ມີຄວາມເຂັ້ມແຂງ ແລະ ເປັນເອກະພາບໃນທົ່ວປະເທດ.ຄະນະເລຂາທິການສູນກາງພັກ ອອກຄຳສັ່ງແນະນຳດັ່ງນີ້:

I. ຈຸດປະສົງລະດັບຄາດຫມາຍ:

1. ເພື່ອຍົກສູງບົດບາດ ແລະ ເພີ່ມທະວີຄວາມສາມາດໃນການນຳພາ ຂອງອົງການແນວລາວສ້າງຊາດແຕ່ລະຂັ້ນໃຫ້ມີຄວາມຫນັກແຫນ້ນ-ເຂັ້ມແຂງ;

2. ເພື່ອແນໃສ່ໃຫ້ຄະນະປະຈຳພັກນະຄອນຫລວງ ແລະ ແຂວງໃນທົ່ວປະເທດ ມີຄວາມຮັບຜິດຊອບໃນການຄົ້ນຄ້ວາປະກອບບຸກຄະລາກອນເປັນການນຳຂອງແນວລາວສ້າງຊາດນະຄອນຫລວງ, ແຂວງ, ເມືອງ ຖືກຕ້ອງຕາມມາດຖານ ແລະ ເງື່ອນໄຂ;

3. ເພື່ອແນໃສ່ປັບປຸງດ້ານບຸກຄະລາກອນ ຂອງແນວລາວສ້າງຊາດຂັ້ນທ້ອງຖິ່ນ ໃຫ້ມີຄວາມຫນັກແຫນ້ນ-ເຂັ້ມແຂງ ທັງຮັບປະກັນທາງດ້ານຈຳນວນ ແລະ ຄຸນນະພາບ ເພື່ອໃຫ້ສາມາດເຄື່ອນໄຫວປະຕິບັດຫນ້າທີ່ການເມືອງໃນໄລຍະໃຫມ່ຕາມພາລະບົດບາດຂອງຕົນນັບມື້ນັບສູງຂຶ້ນ.

II. ເນື້ອໃນການກະກຽມບຸກຄະລາກອນ ປະກອບເຂົ້າເປັນປະທານ, ຮອງ ປະທານ ແລະ ກຳມະການແນວລາວສ້າງຊາດ ຂັ້ນນະຄອນຫລວງ, ແຂວງ ແລະເມືອງ:

ກ. ມາດຖານ:

1). ດ້ານຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ:

- ຕ້ອງມີທັດສະນະຫລັກຫມັ້ນການເມືອງຫນັກແຫນ້ນ, ມີຄວາມຈົ່ງຮັກພັກດີຕໍ່ອຸດົມການສັງຄົມນິຍົມ, ມີຄວາມເປັນເອກະພາບສູງຕໍ່ພາລະກິດປ່ຽນແປງໃຫມ່ ແລະ ນ້ຳໃຈຮັບໃຊ້ປະຊາຊົນຢ່າງແທ້ຈິງ.

- ເປັນຜູ້ທີ່ມີບົດບາດ, ໄດ້ຮັບຄວາມເຄົາລົບນັບຖື, ໄວ້ວາງໃຈຈາກມະຫາຊົນ ແລະ ປະຊາຊົນບັນດາເຜົ່າ, ມີຄວາມສາມັກຄີຢ່າງກ້ວາງຂວາງ, ບໍ່ມີແນວຄິດຈຸ້ມເຈື້ອເຊື້ອສາຍ ແລະ ເຄົາລົບສິດເປັນເຈົ້າຂອງປະຊາຊົນລາວບັນດາເຜົ່າ.

- ເປັນແບບຢ່າງໃນການປະຕິບັດລະບຽບ, ກົດໝາຍຢ່າງເຂັ້ມງວດ, ມີແບບແຜນດໍາລົງຊີວິດທີ່ປອດໃສ, ບໍ່ສວຍໂອກາດ, ບໍ່ໃຊ້ສິດອໍານາດ ແລະ ບໍ່ສວຍໃຊ້ໜ້າທີ່ຕໍາແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ຄອບຄົວ.

2). ດ້ານຄວາມຮູ້:

- ຕ້ອງມີຄວາມຮູ້ ແລະ ກໍາແໜ້ນແນວທາງນະໂຍບາຍຂອງພັກ, ລະບຽບ-ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ; ເອົາໃຈໃສ່ຕໍ່ການປັບປຸງຍົກລະດັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈຂອງປະຊາຊົນບັນດາເຜົ່າ.

- ຮູ້ສຶກສາອົບຮົມ ແລະ ໄກ່ເກ່ຍບັນຫາຫຍຸ້ງຍາກທີ່ເກີດຂຶ້ນ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

- ຮູ້ນໍາພາເຕົ້າໂຮມຄວາມສາມັກຄີປອງດອງທົ່ວປວງຊົນ, ຮູ້ປຸກລະດົມຂົນຂວາຍປະຊາຊົນບັນດາເຜົ່າເຂົ້າໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ໃນແຕ່ລະໄລຍະ.

3). ດ້ານຄວາມສາມາດ:

- ສາມາດກໍາແໜ້ນແນວທາງປ່ຽນແປງໃໝ່ຂອງພັກ ແລະ ກົດໝາຍຂອງລັດໃນແຕ່ລະດ້ານ, ສາມາດກໍາໄດ້ຈຸດພິເສດ ແລະ ທ່າແຮງຂອງແຕ່ລະຊົນເຜົ່າ.

- ມີຄວາມສາມາດນໍາພາເຕົ້າໂຮມຄວາມສາມັກຄີປອງດອງ ແລະ ປຸກລະດົມຊັ້ນຄົນຕ່າງໆ ປະຕິບັດແນວທາງນະໂຍບາຍຂອງພັກ, ລະບຽບ-ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ, ບັນດາມະຕິ, ຄໍາສັ່ງຂອງພັກ-ລັດແຕ່ລະໄລຍະ ແລະ ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ.

- ມີຄວາມສາມາດໃນການຄົ້ນຄ້ວາ ແລະ ຫັນແນວທາງນະໂຍບາຍລວມຂອງພັກໃຫ້ເປັນອັນລະອຽດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ; ມີຄວາມຮັບຜິດຊອບສູງ ແລະ ສາມາດເປັນຄັນທຸງໃຫ້ປະຊາຊົນລາວບັນດາເຜົ່າໃນການແກ້ໄຂ, ໄກ່ເກ່ຍບັນຫາ ແລະ ຄໍາສະເໜີຂອງປະຊາຊົນໃນທ້ອງຖິ່ນຕົນ.

4). ແບບແຜນວິທີເຮັດວຽກ:

- ມີແບບແຜນວິທີນໍາພາ, ວິທີເຮັດວຽກທີ່ຖືກຕ້ອງ ແລະ ວິທະຍາສາດ, ເຄົາລົບ ແລະ ປະຕິບັດຫລັກການລວມສູນປະຊາທິປະໄຕ, ມີຫົວຄິດປະດິດສ້າງ, ກ້າຄິດ, ກ້າເຮັດ, ກ້າຮັບຜິດຊອບ ແລະ ມີຄວາມຍຸຕິທໍາ; ມີທັດສະນະມະຫາຊົນຢ່າງຖືກຕ້ອງ, ລົງໃກ້ຊິດຕິດແທດກັບປະຊາຊົນ, ຮູ້ຟັງ ແລະ ເກັບກໍາຄໍາຄິດຄໍາເຫັນທີ່ຖືກຕ້ອງຂອງປະຊາຊົນ ນໍາສະເໜີຕໍ່ອົງການຈັດຕັ້ງພັກ-ລັດທີ່ກ່ຽວຂ້ອງ ເພື່ອນໍາໄປຄົ້ນຄ້ວາແກ້ໄຂ.

- ມີປະສົບການໃນໜ້າທີ່ວຽກງານ ແລະ ຮູ້ເສີມຂະຫຍາຍບົດບາດຊອງແນວລາວສ້າງຊາດ ແລະ ກໍາລັງແຮງຂອງອົງການຈັດຕັ້ງມະຫາຊົນ.

5). ຕໍາແໜ່ງພັກ: ບຸກຄະລາກອນທີ່ຈະແຕ່ງຕັ້ງເປັນປະທານແນວລາວສ້າງຊາດນະຄອນຫລວງ, ແຂວງ ແລະ ເມືອງຕ້ອງມີຕໍາແໜນງເປັນຄະນະປະຈໍາພັກຂຶ້ນໄປ.

6). ດ້ານສຸຂະພາບ: ມີສຸຂະພາບແຂງແຮງດີ ແລະ ສາມາດປະຕິບັດໜ້າທີ່ວຽກງານໄດ້ເປັນປົກກະຕິ.

ຂ. ເງື່ອນໄຂຜູ້ທີ່ຈະເປັນປະທານ, ຮອງປະທານ ແລະ ຄະນະກໍາມະການແນວລາວສ້າງຊາດ ນະຄອນຫລວງ, ແຂວງ ແລະ ເມືອງ.

- ບຸກຄະລາກອນທີ່ຈະເປັນປະທານ, ຮອງປະທານ ແລະ ຄະນະກໍາມະການແນວລາວສ້າງຊາດນະຄອນຫລວງ, ແຂວງ ແລະ ເມືອງ ຕ້ອງແມ່ນກອງປະຊຸມໃຫຍ່ ຫລື ກອງປະຊຸມສາມັນ, ວິສາມັນ ຂອງແນວລາວສ້າງຊາດຂັ້ນນັ້ນ ເປັນ

ຜູ້ປົກສາຫາລືສະເຫນີແຕ່ງຕັ້ງ ດ້ວຍການລົງປະຊາມະຕິຮັບຮອງເອົາໂດຍການຊີ້ນໍາຈາກຄະນະປະຈໍາພັກນະຄອນຫລວງ, ແຂວງ ແລະ ເມືອງ; ຫ້າມການແຕ່ງຕັ້ງກ່ອນການຮັບຮອງເປັນກໍາມະການ.

- ເດັດຂາດບໍ່ເອົາຜູ້ທີ່ເສຍບົດບາດ-ອິດທິພົນ, ມີບັນຫາທາງດ້ານເສດຖະກິດ, ການສໍ້ລາດ-ບັງຫລວງ ແລະ ຂາດຄວາມເປັນແບບຢ່າງ ໃນການປະຕິບັດກົດລະບຽບຂອງພັກ, ກົດຫມາຍຂອງລັດເຂົ້າເປັນປະທານ, ຮອງປະທານ, ຄະນະກໍາມະການແນວລາວສ້າງຊາດນະຄອນຫລວງ, ແຂວງ ແລະ ເມືອງ.
- ກໍລະນີມີການຍົກຍ້າຍ, ສັບຊ້ອນຫນ້າທີ່ຂອງປະທານ, ຮອງປະທານແນວລາວສ້າງຊາດນະຄອນຫລວງ, ແຂວງ ແລະ ເມືອງ, ຄະນະປະຈໍາພັກນະຄອນຫລວງ, ແຂວງ-ເມືອງ ຕ້ອງສົມທົບ ແລະ ໄດ້ຮັບການເຫັນ ດີຈາກແນວລາວສ້າງຊາດຂັ້ນເທິງຖັດຕົນສາກ່ອນ, ຈຶ່ງສາມາດນໍາເອົາເປົ້າຫມາຍບຸກຄະລາກອນ ສະເຫນີຕໍ່ກອງປະຊຸມຄະນະກໍາມະການແນວລາວສ້າງຊາດຂັ້ນຂອງຕົນ ເພື່ອຮັບຮອງແລ້ວຈຶ່ງແຕ່ງຕັ້ງ ຫລື ສັບຊ້ອນຫນ້າທີ່ໃຫມ່.

ຄ. ໂຄງປະກອບດ້ານຈໍານວນຮອງປະທານ ແລະ ຄະນະກໍາມະການແນວລາວສ້າງຊາດຂັ້ນນະຄອນຫລວງ, ແຂວງ ແລະ ເມືອງ:

# ຈໍານວນຮອງປະທານແນວລາວສ້າງຊາດຂັ້ນນະຄອນຫລວງ, ແຂວງ ແລະ ເມືອງ:

- ຂັ້ນນະຄອນຫລວງ ແລະ ແຂວງໃນທົ່ວປະເທດໃຫ້ປະກອບຈໍານວນຮອງປະທານ 2-3 ທ່ານ/ແຂວງ, ນະຄອນຫລວງ.
- ຂັ້ນເມືອງໃນທົ່ວປະເທດ ໃຫ້ປະກອບຈໍານວນຮອງປະທານ 2 ທ່ານ/ເມືອງ.

# ຈໍານວນກໍາມະການແນວລາວສາ້ງຊາດນະຄອນຫລວງ, ແຂວງ ແລະເມືອງ: ມອບໃຫ້ຄະນະປະຈໍາພັກນະຄອນຫລວງ, ແຂວງ ແລະ ເມືອງ ເປັນຜູ້ກໍານົດຕາມຄວາມເຫມາະສົມ ໂດຍອີງໃສ່ຈໍານວນປະຊາກອນ ແລະ ຈໍານວນຊົນເຜົ່າຂອງແຂວງ ແລະ ເມືອງເປັນຕົວກໍານົດ.

- ໂຄງປະກອບຄະນະກໍາມະການແນວລາວສ້າງຊາດແຕ່ລະຂັ້ນ ໃຫ້ປະກອບມີຊົນເຜົ່າ, ເພດຍິງ, ຕາງຫນ້າຊັ້ນຄົນ, ຜູ້ຊົງຄຸນວຸດທິ ແລະ ອົງການຈັດຕັ້ງສັງຄົມ ທີ່ມີຄວາມກ້າວຫນ້າ ຢູ່ໃນທ້ອງຖິ່ນຕົນ.

III. ວິທີຈັດຕັ້ງປະຕິບັດ:

1. ຄະນະພັກຂັ້ນຕ່າງໆ ຄົ້ນຄ້ວາເຊື່ອມຊຶມຄໍາສັ່ງແນະນໍາສະບັບນີ້ແລ້ວ, ໃຫ້ຫັນເປັນແຜນການ, ໂຄງການລະອຽດ ເພື່ອຊີ້ນໍາອົງການແນວລາວສ້າງຊາດຂັ້ນຂອງຕົນ ນໍາໄປຈັດຕັ້ງປະຕິບັດ.
2. ຄະນະກໍາມະການແນວລາວສ້າງຊາດນະຄອນຫລວງ, ແຂວງ ແລະ ເມືອງ ເປັນເສນາທິການໂດຍກົງ ໃຫ້ຄະນະພັກ, ຄະນະປະຈໍາພັກຂັ້ນຂອງຕົນໃນການຄົ້ນຄ້ວາບຸກຄະລາກອນ ເພື່ອແຕ່ງຕັ້ງເຂົ້າໃນອົງການແນວລາວສ້າງຊາດຂັ້ນຂອງຕົນ.
3. ການເລືອກເອົາບຸກຄະລາກອນເຂົ້າເປັນປະທານ, ຮອງປະທານ ແລະ ຄະນະກໍາມະການແນວລາວສ້າງຊາດນະຄອນຫລວງ, ແຂວງ ແລະ ເມືອງ ຕ້ອງກໍາແຫນ້ນມາດຖານ ແລະ ເງື່ອນໄຂ ທີ່ວາງໄວ້, ມີທັດສະນະຖືກຕ້ອງ, ເຮັດເປັນຫມູ່ຄະນະ, ຕ້ານແນວຄິດເຫັນແກ່ຈຸ້ມເຈື້ອ-ຍາດຕິພີ່ນ້ອງ, ຫມູ່ເພື່ອນ ໂດຍບໍ່ຄໍານຶງເຖິງມາດຖານ-ເງື່ອນໄຂ.
4. ຜ່ານການຈັດຕັ້ງປະຕິບັດຕົວຈິງ, ຫາກມີບັນຫາໃດຫຍຸ້ງຍາກ, ບັນຫາບໍ່ຈະແຈ້ງ ໃຫ້ພົວພັນກັບສູນກາງແນວລາວສ້າງຊາດ ເພື່ອໃຫ້ສູນກາງແນວລາວສ້າງຊາດ ຂໍການຊີ້ນໍາຈາກຄະນະເລຂາທິການສູນກາງພັກ ແລ້ວແຈ້ງໃຫ້ບັນດາສະຫາຍຮັບຊາບ.

ຕ. ຄະນະເລຂາທິການສູນກາງພັກ

ຜູ້ປະຈຳການ

ບຸນຍັງ ວໍລະຈິດ